ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3662

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ...../ກຊສ
ນະຄອນຫຼວງວຽງຈັນ, ວັນທີ 3 ກ້ຽງ 2021

ຄຳແນະນຳ
ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 451/ນຍ, ລົງວັນທີ 23 ທັນວາ 2019;
- ອີງຕາມ ມາດຕາ 25 ແລະ 26 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີຂອງກົມນິຕິກຳ ສະບັບເລກທີ 449/ກຊສ.ກນກ, ລົງວັນທີ 8 ກໍລະກົດ 2021.

ລັດຖະມົນຕີ ອອກຄຳແນະນຳ:

1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດອອກ ເພື່ອເປັນບ່ອນອີງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021 ໃຫ້ຈັດຕັ້ງປະຕິບັດມີຄວາມເປັນເອກະພາບກັນ, ຄົບຖ້ວນ ແລະ ຖືກຕ້ອງ ພ້ອມທັງມອບລາຍຮັບຈາກການເກັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວເຂົ້າງົບປະມານ ຕາມກົດໝາຍ.

2. ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແມ່ນ ຄ່າສິດຄຸ້ມຄອງບໍລິຫານລັດ ທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານຂະແໜງການຂອງລັດ ດ້ວຍການຢັ້ງຢືນ ແລະ/ຫຼື ອະນຸຍາດ.

ຄ່າບໍລິການ ແມ່ນ ຄ່າບໍລິຫານທາງດ້ານວິຊາການ ທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນການໃຊ້ບໍລິການຂອງຂະແໜງການລັດໃນການເຄື່ອນໄຫວຮັບໃຊ້ສັງຄົມ ໂດຍບໍ່ຫວັງຜົນກຳໄລ ແລະ ເປັນການຊ່ວຍໜູນການໃຊ້ຈ່າຍງົບປະມານຂອງລັດ.

3. ອັດຕາຄ່າທຳນຽມຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ອັດຕາຄ່າທຳນຽມຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 6, ມາດຕາ 25 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021 ມີດັ່ງນີ້:

3.1. ອັດຕາຄ່າທຳນຽມກ່ຽວກັບທີ່ດິນ ໃຫ້ຈັດເກັບ ດັ່ງນີ້:

ລ/ດ	ເນື້ອໃນລາຍການ	ຫົວໜ່ວຍ	ອັດຕາ (ກີບ)
1)	**ຄ່າທຳນຽມການຂຶ້ນທະບຽນອອກໃບຕາດິນ**		
1	ການຂຶ້ນທະບຽນອອກໃບຕາດິນ (ອອກໃບຕາດິນຄັ້ງທຳອິດ)		ຍົກເວັ້ນ
2	ການຂຶ້ນທະບຽນອອກໃບຕາດິນ ເພື່ອປຸກສ້າງຄອນໂດມິນຽນ	ໃບ	2.000.000
3	ອອກໃບຕາດິນລັດໃຫ້ແກ່ຜູ້ເຊົ່າ ຫຼື ຜູ້ສຳປະທານ, ຜູ້ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ	ໃບ	100.000
2)	**ຄ່າທຳນຽມຈົດທະບຽນການປ່ຽນແປງສິດນຳໃຊ້ທີ່ດິນ**		
1	ການຈົດທະບຽນສືບທອດສິດນຳໃຊ້ທີ່ດິນຂອງລູກ (ລູກຄົງ, ລູກ ລ້ຽງ, ລູກນ້ຳ), ພີ່ນ້ອງ ຫຼື ເມຍ ທີ່ມີຊີວິດຢູ່ ແລະ ຜູ້ສືບທອດແທນທີ່ຕາມຍາດສາຍຕັ້ງຂອງຜູ້ເສຍຊີວິດ		
	ມູນຄ່າທີ່ດິນຫຼາດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງ ຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	10.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	20.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າ ຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	50.000
2	ການໂອນສິດນຳໃຊ້ທີ່ດິນແກ່ລູກ (ລູກຄົງ, ລູກລ້ຽງ, ລູກນ້ຳ)		
	ມູນຄ່າທີ່ດິນຫຼາດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງ ຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	10.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	20.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າ ຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	50.000
3	ການຈົດທະບຽນສືບທອດສິດນຳໃຊ້ທີ່ດິນ ແກ່ຍາດສາຍຕັ້ງ (ພໍ່, ແມ່ ຫຼື ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ ຫຼື ທວດ) ຂອງຜູ້ເສຍຊີວິດ		
	ມູນຄ່າທີ່ດິນຫຼາດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງ ຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	20.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນ ມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	40.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າ ຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	60.000
4	ການໂອນສິດນຳໃຊ້ທີ່ດິນແກ່ຍາດສາຍຕັ້ງ (ພໍ່, ແມ່, ປູ່, ຍ່າ, ພໍ່ ເຖົ້າ, ແມ່ເຖົ້າ, ທວດ)		
	ມູນຄ່າທີ່ດິນຫຼາດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງ	ໃບ	20.000

	ຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ		
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	40.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	60.000
5	ການຈົດທະບຽນສືບທອດສິດນຳໃຊ້ທີ່ດິນແກ່ຍາດສາຍຂວາງ (ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ, ເຫຼນ) ຂອງຜູ້ເສຍຊີວິດ ແລະ ອອກໃບຕາດິນໃຫ້ຜູ້ສືບທອດ		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	60.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	120.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	150.000
6	ການໂອນສິດນຳໃຊ້ທີ່ດິນແກ່ຍາດສາຍຂວາງ (ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ, ເຫຼນ) ແລະ ອອກໃບຕາດິນໃຫ້ຜູ້ໄດ້ຮັບໂອນສິດນຳໃຊ້ທີ່ດິນ		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	30.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	60.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	120.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	150.000
7	ການຈົດທະບຽນໂອນສິດນຳໃຊ້ທີ່ດິນ ຈາກເຈົ້າຂອງເດີມທີ່ບໍ່ແມ່ນສາຍຍາດ ຫຼື ສືບທອດມູນມໍຣະດົກ ຕາມພິໄນກຳ ທີ່ບໍ່ແມ່ນສາຍຍາດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3, 4, 5 ແລະ 6		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	100.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	200.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	300.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	500.000
8	ການຈົດທະບຽນສັນຍາຂາຍຝາກສິດນຳໃຊ້ທີ່ດິນກໍລະນີຜູ້ຂາຍບໍ່ຊື້ຄືນຕາມກຳນົດເວລາ		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງ	ຕອນ	100.000

	ຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ		
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	200.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	300.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	500.000
9	ການຈົດທະບຽນສັນຍາແລກປ່ຽນສິດນຳໃຊ້ທີ່ດິນ		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	100.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	200.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	300.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ໃບ	500.000
10	ການຈົດທະບຽນ ຊື້ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ລວມທັງການແລກປ່ຽນສິດນຳໃຊ້ທີ່ດິນດັ່ງກ່າວ	ໃບ	500.000
11	ການຈົດທະບຽນການເອົາສິດນຳໃຊ້ທີ່ດິນ ເຂົ້າເປັນຫຸ້ນ		
	ມູນຄ່າທີ່ດິນຫຼຸດ 500 ລ້ານກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	100.000
	ມູນຄ່າທີ່ດິນແຕ່ 500 ລ້ານກີບ ຫາ 5 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	200.000
	ມູນຄ່າທີ່ດິນຫຼາຍກວ່າ 5 ຕື້ກີບ ຫາ 10 ຕື້ກີບ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	300.000
	ມູນຄ່າທີ່ດິນຫຼາຍກວ່າ 10 ຕື້ກີບຂຶ້ນໄປ ຕາມການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ	ຕອນ	500.000
12	ຈົດທະບຽນການຫັນສິດນຳໃຊ້ທີ່ດິນລັດ ເປັນສິດນຳໃຊ້ທີ່ດິນຂອງບຸກຄົນ	ໃບ	100.000
13	ການຈົດທະບຽນທາດສະພາບ ເປັນຕົ້ນ ການຂໍທາງຜ່ານ, ການຂໍໃຫ້ຮ່ອງນ້ຳໄຫຼຜ່ານ	ຄັ້ງ	50.000
3)	**ຄ່າທຳນຽມຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ**		
1	ການຈົດທະບຽນສັນຍາຄ້ຳປະກັນ ດ້ວຍການເອົາສິດນຳໃຊ້ທີ່ດິນເປັນຫຼັກ:		
	ມູນຄ່າແຕ່ 500 ລ້ານກີບ ລົງມາ	ຍົກເວັ້ນ	
	ມູນຄ່າຫຼາຍກວ່າ 500 ລ້ານກີບ ຫາ 20 ຕື້ກີບ	ຄັ້ງ	50.000
	ມູນຄ່າຫຼາຍກວ່າ 20 ຫາ 50 ຕື້ກີບ	ຄັ້ງ	100.000
	ມູນຄ່າຫຼາຍກວ່າ 50 ຕື້ ກີບ ຫາ 100 ຕື້ກີບ	ຄັ້ງ	150.000
	ມູນຄ່າຫຼາຍກວ່າ 100 ຕື້ກີບ ຂຶ້ນໄປ	ຄັ້ງ	200.000

2	ການຈົດທະບຽນສັນຍາເຊົ່າທີ່ດິນ	ຄັ້ງ	200.000
3	ການຈົດທະບຽນສັນຍາສໍາປະທານທີ່ດິນ	ຄັ້ງ	1.000.000
4	ການຈົດທະບຽນຍົກເລີກ ຫຼື ຕໍ່ ສັນຍາຄ້ໍາປະກັນ	ຄັ້ງ	50.000
5	ການຈົດທະບຽນຍົກເລີກ ຫຼື ຕໍ່ ສັນຍາເຊົ່າທີ່ດິນ	ຄັ້ງ	50.000
6	ການຈົດທະບຽນຍົກເລີກ ຫຼື ຕໍ່ ສັນຍາສໍາປະທານທີ່ດິນ	ຄັ້ງ	500.000
7	ການຈົດທະບຽນ ຫຼື ຍົກເລີກ ສັນຍາຂາຍຝາກ	ຄັ້ງ	150.000
8	ການຈົດທະບຽນໂອນສັນຍາເຊົ່າ ຫຼື ໃຫ້ຜູ້ອື່ນເຊົ່າຕໍ່	ຄັ້ງ	150.000
9	ການຈົດທະບຽນໂອນສັນຍາສໍາປະທານທີ່ດິນ ຫຼື ໃຫ້ຜູ້ອື່ນສໍາປະທານທີ່ດິນຕໍ່	ຄັ້ງ	500.000
10	ການຈົດທະບຽນສັນຍາການເອົາສິດນໍາໃຊ້ທີ່ດິນຈັດສັນຂອງລັດ ແບບມີກໍານົດ ເພື່ອເປັນຫຼັກຊັບຄ້ໍາປະກັນການກູ້ຢືມ, ໃຫ້ເຊົ່າ ແລະ ຍົກ ເລີກສັນຍາ	ຄັ້ງ	500.000
11	ການຈົດທະບຽນການເອົາກໍາມະສິດຫ້ອງຊຸດໃນຄອນໂດມິນຽມ ເພື່ອເປັນຫຼັກຊັບຄ້ໍາປະກັນການກູ້ຢືມ, ໃຫ້ເຊົ່າ ແລະ ຍົກເລີກ ສັນຍາ	ຄັ້ງ	300000

4)	**ຄ່າທໍານຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນປະເພດອື່ນ**			
ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ/ຕາແມັດ)		
		ເຂດຕົວເມືອງ	ເຂດຊານເມືອງ	ເຂດຊົນນະບົດ
1	ການຫັນທີ່ດິນກະສິກໍາ (ລວມທັງທີ່ດິນນາ) ເປັນທີ່ດິນປຸກສ້າງ ເພື່ອເປົ້າໝາຍທາງການຄ້າ	2.000	1.000	500
2	ການຫັນທີ່ດິນກະສິກໍາເປັນທີ່ດິນປຸກສ້າງເພື່ອຢູ່ອາໄສ ສໍາລັບຄອບຄົວ ຖ້າເກີນ 800 ຕາແມັດ	100	50	30
3	ການຫັນທີ່ດິນກະສິກໍາ (ທີ່ດິນນາ) ເປັນທີ່ດິນປຸກສ້າງອາໄສ ສໍາລັບຄອບຄົວ	100	50	30
4	ການຫັນທີ່ດິນປຸກສ້າງເປັນທີ່ດິນກະສິກໍາ	5	3	2
5	ການຫັນປ່ຽນທີ່ດິນປ່າໄມ້ທໍາມະຊາດເປັນທີ່ດິນປະເພດອື່ນ	25.000	20.000	15.000
5)	**ຄ່າທໍານຽມອອກໃບຢັ້ງຢືນຕ່າງໆກ່ຽວກັບທີ່ດິນ**			
1	ການອອກໃບຢັ້ງຢືນ ການນໍາໃຊ້ທີ່ດິນປ່າໄມ້ໃຫ້ແກ່ ປະຊາຊົນທີ່ໄດ້ອາໄສ ແລະ ທໍາການຜະລິດໃນເຂດທີ່ດິນປ່າໄມ້	ຄັ້ງ		20.000
2	ການອອກໃບອະນຸຍາດໃຫ້ດໍາເນີນທຸລະກິດກ່ຽວກັບທີ່ດິນ	ຄັ້ງ		2.000.000
3	ການອອກໃບຢັ້ງຢືນກໍາມະສິດຫ້ອງຊຸດໃນຄອນໂດມິນຽມ	ຄັ້ງ		500.000

ການຄິດໄລ່ອັດຕາຄ່າທໍານຽມການຫັນປ່ຽນທີ່ດິນປ່າໄມ້ທໍາມະຊາດໄປເປັນທີ່ດິນປະເພດອື່ນ ສໍາລັບໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕາມຂໍ້ 5 (ຂອງຂໍ້ 4 ຄ່າທໍານຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ) ແມ່ນໃຫ້ຄິດໄລ່ຕາມການກໍານົດເຂດສົ່ງເສີມການລົງທຶນ ທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 2 ຄໍາແນະນໍາຂອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0760/ກຜທ, ລົງວັນທີ 14 ພຶດສະພາ 2021 ກ່ຽວກັບການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກໍາໄລ

ແລະ ດ້ານຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ.

3.2. ອັດຕາຄ່າທຳນຽມກ່ຽວກັບສິ່ງແວດລ້ອມ ໃຫ້ຈັດເກັບ ດັ່ງນີ້:

1	ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມຮັບຮອງບົດການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE)	ຄັ້ງ	500.000
2	ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESIA)	ຄັ້ງ	1.000.000
3	ໃບອະນຸຍາດ ແລະ ຕໍ່ໃບອະນຸຍາດດຳເນີນການບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ແລະ ບໍລິສັດທີ່ປຶກສາ	ຄັ້ງ	2.500.000
4	ໃບຢັ້ງຢືນຮັບຮອງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ສຳລັບທຸລະກິດຄອບຄົວ	ຄັ້ງ	20.000
5	ໃບຢັ້ງຢືນ ຮັບຮອງແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESMMP) ສະບັບປັບປຸງ, ແຜນໄລຍະກໍ່ສ້າງ ແລະ ໄລຍະດຳເນີນງານ ສຳລັບໂຄງການທີ່ດຳເນີນ ESIA	ຄັ້ງ	500.000
6	ບໍລິສັດທີ່ປຶກສາ ຫຼື ທີ່ປຶກສາຕ່າງປະເທດ ທີ່ມີໃບອະນຸຍາດດຳເນີນການບໍລິການ ດ້ານສິ່ງແວດລ້ອມຢູ່ປະເທດໃດໜຶ່ງມາແລ້ວ. ການລົງທະບຽນການບໍລິການ ດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ	ຄັ້ງ	2.500.000
7	ຄ່າລົງທະບຽນທີ່ປຶກສາດ້ານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA)	ຄັ້ງ	1.000.000
8	ຕໍ່ອາຍຸໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມຮັບຮອງບົດສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ	ຄັ້ງ	100.000
9	ຕໍ່ອາຍຸໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ	ຄັ້ງ	500.000
10	ບໍລິສັດທີ່ປຶກສາ ຫຼື ທີ່ປຶກສາຕ່າງປະເທດ ທີ່ມີໃບອະນຸຍາດດຳເນີນການບໍລິການທາງດ້ານສິ່ງແວດລ້ອມຢູ່ປະເທດໃດໜຶ່ງມາແລ້ວ. ການລົງທະບຽນການບໍລິການດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ	ຄັ້ງ	2.500.000

3.3. ອັດຕາຄ່າທຳນຽມກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຈັດເກັບ ດັ່ງນີ້:

1	ໃບອະນຸຍາດນຳໃຊ້ນ້ຳ	100.000	200.000
2	ໃບອະນຸຍາດປ່ອຍນ້ຳເປື້ອນທີ່ໄດ້ຜ່ານຂະບວນການບຳບັດ	100.000	200.000
3	ໃບອະນຸຍາດຂຸດເຈາະນ້ຳໃຕ້ດິນ	100.000	200.000

3.4. ອັດຕາຄ່າທຳນຽມກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ໃຫ້ຈັດເກັບ ດັ່ງນີ້:

1	ໃບຢັ້ງຢືນການຂຶ້ນທະບຽນຫ້ອງທົດລອງສິ່ງແວດລ້ອມ	ໃບ	200.000
2	ການຈົດທະບຽນຕໍ່ອາຍຸໃບຢັ້ງຢືນຫ້ອງທົດລອງສິ່ງແວດລ້ອມ	ໃບ	100.000
2	ຄ່າທຳນຽມອອກໃບອະນຸຍາດສ້າງຕັ້ງສະຖານີອຸທົກສາດ	ໃບ	150.000

4. ອັດຕາຄ່າບໍລິການຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ອັດຕາຄ່າບໍລິການຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 6, ມາດຕາ 26 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021 ມີດັ່ງນີ້:

4.1. ຄ່າບໍລິການກ່ຽວກັບທີ່ດິນ ໃຫ້ຈັດເກັບ ດັ່ງນີ້:

4.1.1. ຄ່າບໍລິການ ວັດແທກທີ່ດິນປຸກສ້າງ ເພື່ອຂຶ້ນທະບຽນອອກໃບຕາດິນ

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ)/ຕາແມັດ		
	ເຂດສຳຫຼວດ/ວັດແທກ	ຕົວເມືອງ	ຊານເມືອງ	ຊົນນະບົດ
1	ເຂດທົ່ງພຽງ	250	220	200
2	ເຂດພູພຽງ	200	180	160
3	ເຂດພູດອຍ	160	140	100

4.1.2. ຄ່າບໍລິການວັດແທກທີ່ດິນ ເພື່ອອະນຸຍາດໃຫ້ເຊົ່າ ແລະ ສຳປະທານທີ່ດິນ ໂຄງການໄຟຟ້າ, ເຂດເສດຖະກິດພິເສດ, ກາຊິໂນ, ນິຄົມອຸດສາຫະກຳ

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ) /ເຮັກຕາ		
	ເຂດສຳຫຼວດ/ວັດແທກ	ຕົວເມືອງ	ຊານເມືອງ	ຊົນນະບົດ
1	ເຂດທົ່ງພຽງ	300.000	250.000	230.000
2	ເຂດພູພຽງ	250.000	230.000	200.000
3	ເຂດພູດອຍ	200.000	180.000	150.000

4.1.3. ຄ່າບໍລິການ ວັດແທກທີ່ດິນປ່າປູກ ແລະ ທີ່ດິນກະສິກຳ ເພື່ອຂຶ້ນທະບຽນອອກໃບຕາດິນ ທີ່ມີເນື້ອທີ່ບໍ່ເກີນ 5 ເຮັກຕາ

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ)/ຕອນ		
	ເຂດສຳຫຼວດ/ວັດແທກ	ຕົວເມືອງ	ຊານເມືອງ	ຊົນນະບົດ
1	ເຂດທົ່ງພຽງ	250.000	220.000	100.000
2	ເຂດພູພຽງ	200.000	180.000	80.000
3	ເຂດພູດອຍ	160.000	140.000	50.000

4.1.4. ຄ່າບໍລິການວັດແທກທີ່ດິນປ່າປູກ ແລະ ທີ່ດິນກະສິກຳ ເພື່ອຂຶ້ນທະບຽນອອກໃບຕາດິນ ທີ່ມີເນື້ອທີ່ເກີນ 5 ເຮັກຕາ ຂຶ້ນໄປ

ລ/ດ	ເນື້ອໃນລາຍການ	ອັດຕາ(ກີບ)/ຕອນ		
	ເຂດສຳຫຼວດ/ວັດແທກ	ຕົວເມືອງ	ຊານເມືອງ	ຊົນນະບົດ
1	ເຂດທົ່ງພຽງ	250.000	220.000	200.000
2	ເຂດພູພຽງ	160.000	140.000	120.000
3	ເຂດພູດອຍ	120.000	100.000	80.000

4.1.5. ຄ່າບໍລິການວັດແທກທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳເພື່ອອະນຸຍາດໃຫ້ເຊົ່າ ແລະ ສຳປະທານທີ່ດິນ

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ)/ເຮັກຕາ		
	ເຂດສຳຫຼວດ/ວັດແທກ	ຕົວເມືອງ	ຊານເມືອງ	ຊົນນະບົດ
1	ເຂດທົ່ງພຽງ	250.000	220.000	200.000
2	ເຂດພູພຽງ	160.000	140.000	120.000
3	ເຂດພູດອຍ	120.000	100.000	80.000

ໃຫ້ຍົກເວັ້ນການເກັບຄ່າບໍລິການວັດແທກທີ່ດິນ ເພື່ອອອກໃບຕາດິນລັດ ຫຼື ໃບແຜນທີ່ດິນລັດ ໃຫ້ແກ່ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນຢູ່ບັນດາບ້ານທຸກຍາກ.

4.2. ຄ່າບໍລິການອອກໃບຢັ້ງຢືນກ່ຽວກັບທີ່ດິນ ໃຫ້ຈັດເກັບ ດັ່ງນີ້:

ລ/ດ	ເນື້ອໃນລາຍການ	ຫົວໜ່ວຍ	ອັດຕາ (ກີບ)
1	ອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ	ໃບ	80.000
2	ອອກໃບຢັ້ງຢືນການສຳຫຼວດທີ່ດິນ	ໃບ	300.000
3	ເຊົ່າສັນຍານສະຖານີອ້າງອີງສຳຫຼວດວັດແທກທີ່ດິນແບບຕໍ່ເນື່ອງ	ເດືອນ/ເຄື່ອງ	200.000
4	ອອກໃບຢັ້ງຢືນການນຳໃຊ້ທີ່ດິນ	ໃບ	100.000
5	ອອກໃບຢັ້ງຢືນການພັດທະນາທີ່ດິນ	ໃບ	80.000
6	ບໍລິການແຕ້ມ ແລະ ພິມແຜນທີ່ຕາດິນ		
	ຂະໜາດເຈ້ຍ A4	ແຜ່ນ	50.000
	ຂະໜາດເຈ້ຍ A3	ແຜ່ນ	100.000
	ຂະໜາດເຈ້ຍ A2	ແຜ່ນ	150.000
	ຂະໜາດເຈ້ຍ A1	ແຜ່ນ	200.000
	ຂະໜາດເຈ້ຍ A0	ແຜ່ນ	250.000
7	ແບບພິມໃບຕາດິນ ແລະ ໃບທະບຽນທີ່ດິນ	ຊຸດ	10.000
8	ແບບພິມໃບອະນຸຍາດການນຳໃຊ້ທີ່ດິນ	ຊຸດ	10.000
9	ບໍລິການສຳເນົາສຳນວນເອກະສານທີ່ດິນ	ຊຸດ	50.000
10	ຄ່າບໍລິການທາງດ້ານຂໍ້ມູນຂ່າວສານທີ່ດິນ	ຄັ້ງ	10.000

4.3. ຄ່າບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຈັດເກັບ ດັ່ງນີ້:

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ)/ໃບ	
		ຂະໜາດກາງ	ຂະໜາດໃຫຍ່
1	ການອອກໃບອະນຸຍາດນຳໃຊ້ນ້ຳ	50.000	100.000
2	ການອອກໃບອະນຸຍາດຂຸດເຈາະນ້ຳໃຕ້ດິນ	250.000	400.000
3	ຄ່າອອກໃບອະນຸຍາດດຳເນີນການບໍລິການກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ	250.000	400.000

4.4. ຄ່າບໍລິການດ້ານສິ່ງແວດລ້ອມ ສຳລັບການປ່ອຍນ້ຳເປື້ອນຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດ ໃຫ້ຈັດເກັບ ດັ່ງນີ້:

4.4.1. ຄ່າບໍລິການສິ່ງແວດລ້ອມ ສຳລັບການບຳບັດນ້ຳເປື້ອນຈາກຄົວເຮືອນ ຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດ.

ເນື້ອໃນລາຍການ	**ອັດຕາ(ກີບ) /ແມັດກ້ອນ**
ການປ່ອຍນ້ຳເປື້ອນ ຈາກຄົວເຮືອນ	15

4.4.2. ຄ່າບໍລິການ ກ່ຽວກັບສິ່ງແວດລ້ອມ ສຳລັບການປ່ອຍນ້ຳເປື້ອນ ຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.

4.4.2.1. ຄ່າບໍລິການກ່ຽວກັບສິ່ງແວດລ້ອມ ສຳລັບການປ່ອຍນ້ຳເປື້ອນຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດຕາມຕົວວັດແທກຄວາມເຂັ້ມຂຸ້ນຄວາມຕ້ອງການອົກຊີແຊນໃນຂະບວນການປະຕິກິລິຍາທາງເຄມີ (Chemical Oxygen Demand – COD)

ເນື້ອໃນລາຍການ	ບໍລິມາດນ້ຳເປື້ອນ ທີ່ປ່ອຍ (ແມັດກ້ອນ/ມື້)	ຄ່າຄວາມເຂັ້ມຂຸ້ນ ຂອງ COD ເຈືອປົນ ໃນ 1 ລິດ (mg/ລິດ)	ບໍລິມາດ ຂອງ COD ເຈືອປົນທັງໝົດ ຕໍ່ເດືອນ (kg/ເດືອນ)	ອັດຕາ (ກີບ/kg)
ໂຄງການລົງທຶນ ແລະ ກິດຈະການ ຕ່າງໆ	0-10	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	10.000
	>10 ≤50	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	20.000
	>50	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	40.000

4.4.2.2. ຄ່າບໍລິການກ່ຽວກັບສິ່ງແວດລ້ອມສຳລັບການປ່ອຍນ້ຳເປື້ອນຕາມມາດຕະຖານສິ່ງແວດລ້ອມ ແຫ່ງ ຊາດ ຕາມຕົວວັດແທກຄວາມເຂັ້ມຂຸ້ນທາດແຂງແຂວນລອຍ (Total Suspended Solid-TSS)

ເນື້ອໃນລາຍການ	ບໍລິມາດນ້ຳເປື້ອນທີ່ ປ່ອຍ (ແມັດກ້ອນ/ມື້)	ຄ່າຄວາມເຂັ້ມຂຸ້ນ ຂອງ TSS ເຈືອປົນ ໃນ 1 ລິດ (mg/ລິດ)	ຄ່າຄວາມເຂັ້ມຂຸ້ນ TSS ເຈືອປົນທັງ ໝົດຕໍ່ເດືອນ (kg /ເດືອນ)	ອັດຕາ (ກີບ/kg)
ໂຄງການລົງທຶນ ແລະ ກິດຈະການ ຕ່າງໆ	0-10	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	5.000
	>10 ≤50	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	10.000
	>50	ຕາມການວິໄຈຕົວຈິງ	ຄິດໄລ່ຕາມຕົວ ຈິງຕໍ່ເດືອນ	20.000

4.5. ຄ່າບໍລິການກ່ຽວກັບສິ່ງແວດລ້ອມ ໃຫ້ຈັດເກັບ ດັ່ງນີ້:

ລ/ດ	ເນື້ອໃນລາຍການ	ອັດຕາ (ກີບ)
1	ທົບທວນບົດສຶກສາສິ່ງແວດລ້ອມເບື້ອງຕົ້ນ (IEE), ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ	3.000.000

2	ທົບທວນບົດປະເມີນຜົນກະທົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESIA) ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ການກວດກາສິ່ງແວດລ້ອມສັງ ຄົມ ແລະ ທຳມະຊາດ (EMMP)	10.000.000
3	ການຕໍ່ອາຍຸໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ສຳລັບໂຄງການທີ່ໄດ້ຮັບໃບຢັ້ງ ຢືນດ້ານ ສິ່ງແວດລ້ອມ (ສຳລັບໂຄງການ ESIA)	1.000.000
4	ໃບອະນຸຍາດ ດຳເນີນການບໍລິການວິຊາການດ້ານສິ່ງແວດລ້ອມ ແລະ ສັງຄົມ	1.500.000
5	ບໍລິການໃນການທົບທວນແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສຳລັບທຸລະກິດຄອບຄົວ	50.000
6	ທົບທວນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳ ມະຊາດ (ESMMP) ສະບັບປັບປຸງ, ແຜນໄລຍະກໍ່ສ້າງ ແລະ ແຜນໄລຍະດຳເນີນ ງານ ສຳລັບໂຄງການທີ່ດຳເນີນ ESIA	1.500.000

4.6. ຄ່າບໍລິການກ່ຽວກັບການວິໄຈຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ໃຫ້ຈັດເກັບ ດັ່ງນີ້:

4.6.1. ຄ່າບໍລິການ ການວິໄຈຕົວຢ່າງນ້ຳທາງດ້ານກາຍຍະພາບ

ລ/ດ	ເນື້ອໃນລາຍການ	ສັນຍາລັກ	ຫົວໜ່ວຍ	ເຕັກນິກວິທີການວິ ໄຈ	ອັດຕາ (ກີບ)
1	ຄວາມຂຸ່ນ	Turbidity	NTU	Electrometric Method	50.000
2	ອຸນຫະພູມ	t	°C	Laboratory & other non-depth measurement	20.000
3	ອຸນຫະພູມ	t	°C	Themometer	40.000
4	ຄວາມເປັນອາຊິດ-ເບສ	pH		Electrometric Method	60.000
5	ການຊັກນຳໄຟຟ້າ	EC	mS/m	EC Meter	60.000
6	ສີ	Colour	Pt-Co	Platinum-Cobalt	60.000
7	ກິ່ນ	Odour		Threshold-Odour test	40.000
8	ຄວາມກະດ້າງລວມ	Total Hardness	mg/l	EDTA Titrimetric Method	80.000
9	ທາດແຂງລະລາຍໃນນ້ຳທັງ ໝົດ	TDS	mg/l	Dry Evaporation 102-105o C, 1 hour	100.000
10	ທາດແຂງທັງໝົດ	TS	mg/l	Total Solids Dried at 103-105o C	100.000
11	ທາດແຂງທັງໝົດທີ່ບໍ່ ລະລາຍໃນນ້ຳ	TSS	mg/l	Glass Fiber Filter Disc	100.000
12	ທາດແຂງອິງຄະທາດທີ່ລະ ເຫີຍທັງໝົດ	TVOC	mg/l	Ignited at 550.c	120.000

4.6.2. ຄ່າບໍລິການ ການວິໄຈ ຕົວຢ່າງນ້ຳທາງດ້ານຈຸລິນຊີວິທະຍາ

1	ບີໂອດີ	BOD5	mg/l	5-days BOD Test Dissolved Oxygen by Azide	100.000

				Modification or Membrane Electrode Method	
2	ອ້ອກຊີເຈນລະລາຍໃນນ້ຳ	DO	mg/l	Membrane Electrode Method	60.000
3	ອ້ອກຊີເຈນລະລາຍໃນນ້ຳ	DO	mg/l	Azide Modification	100.000
4	ເຊື້ອຟີໂຄລໂຄລີຟອມ	Faecal Coliform	MPN /100ml	Multiple-tube Fermentation Technique for Members of the Coliform Group	200.000
5	ຈຸລິນຊີໂຄລີຟອມລວມ	Total Coliform	MPN /100ml	Multiple-tube Fermentation Technique for Members of the Coliform Group	200.000
6	ເຊື້ອຈຸລິນຊີອີໂຄລາຍ	E - Coli	MPN /100ml	Escherichia Coli	200.000
7	ສະເຕັບໂຕກົກຊີ		MPN /100ml	Fecal Streptococci	200.000
8	ແບກທີເຣຍລວມ		CFU ml	Total Plate Cout	200.000
9	ຊາໂມແນນລາ		MPN /100ml	Micro-bacterium Salmonella	200.000

4.6.3. ຄ່າບໍລິການ ການວິໄຈ ຕົວຢ່າງນ້ຳ ທາງດ້ານເຄມີ

1	ຄວາມເປັນດ່າງ (Alkalinity)	Alk	mg/l	Titration Method	60.000
2	ຄວາມເປັນກົດ (Acidity)	Acid	mg/l	Titration Method	90.000
3	ຊີໂອດີ	COD	mg/l	Titrimetric Method (Mn)	100.000
4	ຊີໂອດີ	COD	mg/l	Potassium Dichomate Digestion Open Reflux/Closed Reflux	120.000
5	ນ້ຳມັນ ແລະ ໄຂມັນ	Oil and Grease	mg/l	Partition-Gravimetric Method	150.000
6	ນ້ຳມັນ ແລະ ໄຂມັນ	Oil and Grease	mg/l	Solvent Extraction by weight	200.000
7	ໄນໂຕຣເຈນລວມ	T-N	mg/l	Persulfate Method and Cadmium reduction Method	200.000
8	ເກລດາລໄນໂຕຣເຈນ	TKN	mg/l	Semi-Micro-Kjeldahl Method and Titrimetric Method	200.000
9	ໄນໄຕຣ – ໄນໂຕຣເຈນ	NO2-N	mg/l	Colorimetric	100.000

				Method	
10	ໄນເຕຼດ – ໄນໂຕຣເຈນ	NO3-N	mg/l	Cadmium reduction Method	100.000
11	ແອມໂມເນຍ-ໄນໂຕຣເຈນ	NH3-N	mg/l	Phenate Method	100.000
12	ຟູອໍໄລດ์	F-	mg/l		100.000
13	ແຄລຊຽມ	Ca2+	mg/l	Direct Air-Acetylene Flame Method	120.000
14	ແມັກເນຊຽມ ໂຊດຽມ	Mg2+	mg/l	Direct Air-Acetylene Flame Method	120.000
15	ໂຊດຽມ	Na+	mg/l	Flame Photometric Method	120.000
16	ໂປຕແທສຊຽມ	K+	mg/l	Flame Photometric Method	120.000
17	ຄຼໍໄລດ์	Cl-	mg/l	Lodometric Method	120.000
18	ຟຣີຄຼໍຣີນ	Cl2	mg/l		120.000
19	ຟອສຟໍຣັສ	P	mg/l		200.000
20	ຟອດສະແຟດ-ຟອສຟໍຣັສ	PO4-P	mg/l	Ascorbic Acid Method	120.000
21	ຟອສຟໍຣັສລວມ	T-P	mg/l	Sample Preparation and Ascorbic Acid Method	120.000
22	ຊັລເຟດ	SO42-	mg/l	Turbidimetric Method	120.000
23	ໄຊຍາໄນດ์ລວມ	T-CN-	mg/l		200.000
24	ໄຊຍາໄນດ์	CN-	mg/l	Pyridine BarbituricAcid Colorimetric or Ion Chromatography Method (Modified)	150.000
25	ມາດ	S2-	mg/l		120.000

4.6.4. ຄ່າບໍລິການ ການວິໄຈ ຕົວຢ່າງນ້ຳ ທາງດ້ານໂລຫະໜັກ

1	ແອນຕິໂມນຽມ	Sb	mg/l	Direct Air-Acetylene Flame Method	150.000
2	ໂຄມຽມ	Cr+6	mg/l	Direct Air-Acetylene Flame Method	150.000
3	ໂຄມຽມລວມ	Total Cr	mg/l	Direct Air-Acetylene Flame Method	150.000
4	ທອງ	Cu	mg/l	Direct Air-Acetylene Flame	150.000

				Method	
5	ເຫຼັກ	Fe	mg/l	Direct Air-Acetylene Flame Method	150.000
6	ແມັງການີສ	Mn	mg/l	Direct Air-Acetylene Flame Method	150.000
7	ນິແກລ	Ni	mg/l	Direct Air-Acetylene Flame Method	150.000
8	ຊີນ	Pb	mg/l	Direct Air-Acetylene Flame Method	150.000
9	ສັງກະສີ	Zn	mg/l	Direct Air-Acetylene Flame Method	150.000
10	ບາຫຼອດ	Hg	mg/l	Cold-Vapor Atomic Absorption Spectrometric Method	200.000
11	ເຊເລນຽມ	Se	mg/l	Absorption Spectrometric Method	200.000
12	ແຄັດມຽມ	Cd	mg/l	Direct Air-Acetylene Flame Method	150.000
13	ອາເຊນິກ	As	mg/l	Absorption Spectrometric Method	150.000
14	ແອນຕິໂມນຽມ	Sb	mg/l	Inductively Coupled Plasma (ICP) Method	170.000
15	ໂຄມຽມລວມ	Cr+6	mg/l		170.000
16	ໂຄມຽມລວມ	Total Cr	mg/l		170.000
17	ທອງ	Cu	mg/l		170.000
18	ເຫຼັກ	Fe	mg/l		170.000
19	ແມັງການີສ	Mn	mg/l		170.000
20	ນິແກລ	Ni	mg/l		170.000
21	ຊີນ	Pb	mg/l		170.000
22	ສັງກະສີ	Zn	mg/l		170.000
23	ເຊເລນຽມ	Se	mg/l		250.000
24	ອາເຊນິກ	As	mg/l		250.000
25	ແຄັດມຽມ	Cd	mg/l		170.000
26	ອະລູມິນຽມ	Al	mg/l		170.000
27	ລິທີລຽມ	Li	mg/l		170.000

28	ບາລຽມ	Ba	mg/l		170.000

4.6.5. ຄ່າບໍລິການ ການເກັບຕົວຢ່າງ ແລະ ວິໄຈອາກາດ

ກ.	ການເກັບຕົວຢ່າງທາງດ້ານສຽງ ແລະ ສັ່ນສະເທືອນ				
1	ສຽງ	Noise	dB	Sound Level Measurement	200.000
2	ການສັ່ນສະເທືອນ	Vibration	Hz	Vibration Meter	200.000
3	ຄວາມໄວລົມ	Wind Speed	m/s	Cup Anemometer	100.000
4	ທິດທາງລົມ	Wind Director	Degrees	Wine Vane	100.000
5	ອຸນຫະພູມອາກາດ	t	C	Multi-stage solid state thermistor, highly linearized	100.000
6	ຄວາມດັນບັນຍາກາດ	BP	mmHg	Solid state pressure Transducer	100.000
7	ຄວາມຊຸ່ມໃນອາກາດ	RH	%	Thin film - polymer capacitor	100.000
8	ປະລິມານຝົນ	Rain	Mm	Tipping bucket	100.000
ຂ	ການເກັບຕົວຢ່າງທາງດ້ານອາກາດທົ່ວໄປ				
1	ຝຸ່ນລະອອງລວມ	TSP/1ຈຸດ	mg/m3	Gravimetric Method	500.000
2	ຝຸ່ນລະອອງທີ່ມີຂະໜາດນ້ອຍກວ່າ 10 ໄມຄຼອນ	PM10/1 ຈຸດ	mg/m3	Gravimetric Method	500.000
				Beta Ray Sensor	650.000
3	ຝຸ່ນລະອອງທີ່ມີຂະໜາດນ້ອຍກວ່າ 2.5 ໄມຄຼອນ	PM2.5/ 1 ຈຸດ	mg/m3	Gravimetric Method	500.000
				Beta Ray Sensor	650.000
4	ຊັລເຟີ ໄດອໍອກໄຊດ໌	SO2	ppm	UV Fluorescence Spectroscopy	1.000.000
				Gas sensitive Electrochemical (GSE) Sensors	300.000
5	ໄນโตรเจน ອໍອກໄຊດ໌	NO2	ppm	Chemilumine scence method	1.000.000
				Gas sensitive Semi conductor (GSS) Sensors	300.000
6	ຄາຣ໌ບອນໂນ ນ້ອກໄຊດ໌	CO	ppm	Non dispersive infrared spectrophotometry (NDIR)	1.000.000
				Gas sensitive Electrochemical (GSE) Sensors	300.000

7	ໂອໂຊນ	O3	mg/m3	Nondispersive Ultraviolet (UV) Absorption Photometry	1.000.000
				Gas sensitive Semi conductor (GSE) Sensors	300.000
8	ໄຮໂດຣເຈນຊັລໄຟດ์	H2S	mg/m3	Gas sensitive Electrochemical (GSE) Sensors	500.000
9	ນິຕຣິກອາຊິດ	HNO3	mg/m3	Ion Chromatographic Method	750.000
10	ຊຸນຟູລິກອາຊິດ	H2SO4	mg/m3	Ion Chromatographic Method	750.000
11	ໄຮໂດເຈນຄຼໍໄລ	HCl	mg/m3	Ion Chromatographic Method	750.000
12	ໄຮໂດຄາບອນລວມ	THC	ppm	Total Hydrocarbon Analyzer	500.000
13	ມີເທນ	CH4	ppm	Total Hydrocarbon Analyzer	500.000
14	ທາດປະສົມອິງຄະທາດທີ່ລະເຫີຍອາຍ	VOCs	ug/m3	Gas chromatography (GC) detection Method	1.000.000

4.6.6. ຄ່າບໍລິການ ທາງດ້ານໂລຫະໜັກ

1	ນິແກລ	Ni	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
2	ຊີນ	Pb	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
3	ອາເຊນິກ	As	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
4	ແຄດມຽມ	Cd	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
5	ທອງ	Cu	mg/m3	Filtering, High volume sampling,	500.000

				Inductively Coupled Plasma (ICP) Method	
6	ເຫຼັກ	Fe	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
7	ມັງການີສ	Mn	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
8	ເຊລີນຽມ	Se	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
9	ບາຫຼອດ	Hg	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
10	ແອນຕິໂມນີ	Sb	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
11	ສັງກະສີ	Zn	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
12	ແຄລຊຽມ	Ca	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000
13	ແບຣຽມ	Ba	mg/m3	Filtering, High volume sampling, Inductively Coupled Plasma (ICP) Method	500.000

4.7. ຄ່າບໍລິການ ກ່ຽວກັບອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ຈັດເກັບ ດັ່ງນີ້:

1	ຂໍ້ມູນອຸຕຸລາຍວັນ: ອຸນຫະພູມອາກາດ (Tmean, EctTx, ExtTn) ອຸນຫະພູມໃຕ້ດິນ ຄວາມຊຸ່ມຂອງອາກາດ (Umean, Ux, Un) ແສງແດດ, ລົມ, ອາຍລະເຫີຍ, ຝົນຄວາມ ດັນສະຖາ	ສະຖານີ/ປັດໄຈ	20.000

	ນິ ຄວາມດັນທຽບກັບໜ້ານ້ຳທະເລ, ຄວາມເຫັນໄກອຸນຫະພູມນ້ຳຄ້າງ, ການຫຸ້ມຫໍ່ຂອງເມກ, ປາກົດການອາກາດ		
2	ຂໍ້ມູນອຸທົກກະສາດລາຍວັນ - ລະດັບນ້ຳ - ກະແສນ້ຳ - ກະແສນ້ຳແຕ່ລະເທື່ອວັດແທກ - ຕະກອນນ້ຳ	 ສະຖານີ/ປັດໄຈ ສະຖານີ/ປັດໄຈ ສະຖານີ/ປັດໄຈ ສະຖານີ/ປັດໄຈ	 20.000 40.000 10.000 10.000
3	ຂໍ້ມູນອຸຕຸລາຍເດືອນ - ອຸນຫະພູມອາກາດ (Tmean, EctTx, ExtTn), ຄວາມຊຸ່ມຂອງອາກາດ (Umean, Ux, Un) ແສງແດດ, ລົມ, ອາຍລະເຫີຍ, ຝົນ - ອຸນຫະພູມໃຕ້ດິນ, ຄວາມດັນສະຖານີ ຄວາມດັນທຽບກັບໜ້ານ້ຳທະເລ, ຄວາມເຫັນໄກ, ອຸນຫະພູມຈຸດນ້ຳຄ້າງ, ການຫຸ້ມຫໍ່ຂອງເມກ, ປາກົດການອາກາດ	 ສະຖານີ/ປັດໄຈ ສະຖານີ/ປັດໄຈ	 10.000 10.000
4	ຂໍ້ມູນອຸທົກກະສາດລາຍເດືອນ: ລະດັບນ້ຳ	ສະຖານີ/ປັດໄຈ	10.000
5	ຂໍ້ມູນແຜ່ນດິນໄຫວ	ສະຖານີ/ປັດໄຈ	200.000
6	ການວິໄຈ ແລະ ສ້າງເອກະສານ ການສ້າງເອກະສານອຸຕຸ-ອຸທົກ ເກນປົກກະຕິ ຄວາມເຂັ້ມຂອງຝົນ (ພ້ອມເສັ້ນສະແດງ) ເສັ້ນສະແດງກະແສນ້ຳ ເສັ້ນສະແດງທິດທາງລົມ (ກຸຫຼາບລົມ)	ສະຖານີ/ປັດໄຈ ສະຖານີ/ປັດໄຈ ສະຖານີ/ປັດໄຈ ສະຖານີ/ປັດໄຈ ສະຖານີ/ປັດໄຈ	100.000 100.000 150.000 150.000 150.000
7	ບໍລິການຂໍ້ມູນສະພາບອາກາດ, ນ້ຳ, ຄາດຄະເນຂອງອາກາດໄລຍະຕ່ຳກວ່າ 24 ຊົ່ວໂມງ: ພະຍາກອນອາກາດລາຍວັນ ພະຍາກອນອາກາດປະຈຳອາທິດ ພະຍາກອນອາກາດປະຈຳເດືອນ ພະຍາກອນອາກາດປະຈຳ 3 ເດືອນ ສະຫຼຸບພະຍາກອນອາກາດປະຈຳປີ	 ຊຸດເອກະສານ ຊຸດເອກະສານ ຊຸດເອກະສານ ຊຸດເອກະສານ ຊຸດເອກະສານ	 50.000 60.000 80.000 100.000 150.000

4.8. ຄ່າບໍລິການສານອາກາດໃຫ້ສາຍການບິນ ໃຫ້ຈັດເກັບ ດັ່ງນີ້:

ສຳລັບເຮືອບິນທີ່ບິນຜ່ານນ່ານຟ້າ (Over Flight)			
1	ນ້ຳໜັກເຮືອບິນແຕ່ 1 – 7	ໂຕນ/ຄັ້ງ	18.000
2	ນ້ຳໜັກເຮືອບິນຫຼາຍກວ່າ 7 – 20	ໂຕນ/ຄັ້ງ	36.000
3	ນ້ຳໜັກເຮືອບິນຫຼາຍກວ່າ 20 – 50	ໂຕນ/ຄັ້ງ	54.000
4	ນ້ຳໜັກເຮືອບິນຫຼາຍກວ່າ 50 – 100	ໂຕນ/ຄັ້ງ	72.000
5	ນ້ຳໜັກເຮືອບິນຫຼາຍກວ່າ 100 – 150	ໂຕນ/ຄັ້ງ	90.000
6	ນ້ຳໜັກເຮືອບິນຫຼາຍກວ່າ 150 – 200	ໂຕນ/ຄັ້ງ	108.000
7	ນ້ຳໜັກເຮືອບິນຫຼາຍກວ່າ 200 – 250	ໂຕນ/ຄັ້ງ	126.000
8	ນ້ຳໜັກເຮືອບິນຫຼາຍກວ່າ 250 – 300	ໂຕນ/ຄັ້ງ	144.000

9	ນ້ຳໜັກເຮືອບິນຫຼາຍກວ່າ 300 ຂຶ້ນໄປ	ໂຕນ/ຄັ້ງ	162.000
ສຳລັບສາຍການບິນຕ່າງປະເທດ ທີ່ນຳໃຊ້ສະໜາມບິນພາຍໃນ			
1	ນ້ຳໜັກເຮືອບິນແຕ່ 1 – 7	ໂຕນ/ຄັ້ງ	90.000
2	ນ້ຳໜັກເຮືອບິນຫຼາຍກວ່າ 7 – 20	ໂຕນ/ຄັ້ງ	180.000
3	ນ້ຳໜັກເຮືອບິນຫຼາຍກວ່າ 20 – 50	ໂຕນ/ຄັ້ງ	450.000
4	ນ້ຳໜັກເຮືອບິນຫຼາຍກວ່າ 50 – 100	ໂຕນ/ຄັ້ງ	540.000
5	ນ້ຳໜັກເຮືອບິນຫຼາຍກວ່າ 100 – 150	ໂຕນ/ຄັ້ງ	720.000
6	ນ້ຳໜັກເຮືອບິນຫຼາຍກວ່າ 150 – 200	ໂຕນ/ຄັ້ງ	900.000
7	ນ້ຳໜັກເຮືອບິນຫຼາຍກວ່າ 200 – 250	ໂຕນ/ຄັ້ງ	1.080.000
8	ນ້ຳໜັກເຮືອບິນຫຼາຍກວ່າ 250 – 300	ໂຕນ/ຄັ້ງ	1.260.000
9	ນ້ຳໜັກເຮືອບິນຫຼາຍກວ່າ 300 ຂຶ້ນໄປ	ໂຕນ/ຄັ້ງ	1.440.000
ສຳລັບສາຍການບິນພາຍໃນ ທີ່ນຳໃຊ້ສະໜາມບິນພາຍໃນ			
1	ນ້ຳໜັກເຮືອບິນແຕ່ 1 – 7	ໂຕນ/ຄັ້ງ	40.000
2	ນ້ຳໜັກເຮືອບິນຫຼາຍກວ່າ 7 – 20	ໂຕນ/ຄັ້ງ	80.000
3	ນ້ຳໜັກເຮືອບິນຫຼາຍກວ່າ 20 – 50	ໂຕນ/ຄັ້ງ	200.000
4	ນ້ຳໜັກເຮືອບິນຫຼາຍກວ່າ 50 – 100	ໂຕນ/ຄັ້ງ	300.000
5	ນ້ຳໜັກເຮືອບິນຫຼາຍກວ່າ 100 – 150	ໂຕນ/ຄັ້ງ	400.000
6	ນ້ຳໜັກເຮືອບິນຫຼາຍກວ່າ 150 – 200	ໂຕນ/ຄັ້ງ	500.000
7	ນ້ຳໜັກເຮືອບິນຫຼາຍກວ່າ 200 – 250	ໂຕນ/ຄັ້ງ	600.000
8	ນ້ຳໜັກເຮືອບິນຫຼາຍກວ່າ 250 – 300	ໂຕນ/ຄັ້ງ	700.000
9	ນ້ຳໜັກເຮືອບິນຫຼາຍກວ່າ 300 ຂຶ້ນໄປ	ໂຕນ/ຄັ້ງ	800.000

5. ການເກັບຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນ.

ການເກັບຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນ ແມ່ນໃຫ້ປະຕິບັດຕາມມາດຕາ 114 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019 ໂດຍຂະແໜງການການເງິນ ເປັນຜູ້ຮັບຜິດຊອບເກັບຄ່າທຳນຽມກ່ຽວກັບທີ່ດິນ. ສ່ວນຄ່າບໍລິການກ່ຽວກັບທີ່ດິນ ແມ່ນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບເກັບຄ່າບໍລິການດັ່ງກ່າວ.

ການຄິດໄລ່ຄ່າທຳນຽມ ແລະ ເກັບຄ່າບໍລິການໃນການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ຕາມກົດໝາຍ ແລະ ລະບຽບການ ແມ່ນ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 169 ຂໍ້ 12 ແລະ ມາດຕາ 170 ຂໍ້ 6 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019

6. ການແຈ້ງ, ການມອບ ແລະ ການນຳໃຊ້, ການຄຸ້ມຄອງ ຄ່າທຳນຽມ ແລະ ຄ່າບໍລິການ

ການແຈ້ງຄ່າທຳນຽມ ແລະ ຄ່າບໍລິການ, ການມອບຄ່າທຳນຽມ ແລະ ຄ່າບໍລິການ, ການນຳໃຊ້ຄ່າທຳນຽມ ແລະ ຄ່າບໍລິການ, ການຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ແລະ ການຄຸ້ມຄອງລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ແມ່ນໃຫ້ປະຕິບັດຕາມມາດຕາ 9, 10, 11, 12 ແລະ 13 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021.

7. ຂໍ້ຫ້າມ ສຳລັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຫ້ອງການ ກະຊວງ, ບັນດາກົມ, ກອງ, ສະຖາບັນ ພາຍໃນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຫ້າມມີພຶດຕິກຳ ດັ່ງນີ້:

1. ກຳນົດອັດຕາເກັບຄ່າທຳນຽມ ແລະ ຄ່າບໍລິການ ຂຶ້ນເອງ;

2. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຊ້ຳຊ້ອນ, ເກີນອັດຕາ ທີ່ກຳນົດໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021;

3. ນຳໃຊ້ຄ່າທຳນຽມ ແລະ ຄ່າບໍລິການ ໂດຍບໍ່ຖືກຕ້ອງກັບກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ;

4. ຮັກສາລາຍຮັບທີ່ໄດ້ຈາກຄ່າທຳນຽມ ແລະ ຄ່າບໍລິການ ໄວ້ຢູ່ນອກລະບົບງົບປະມານແຫ່ງລັດ ແລະ ສ້າງເປັນຄັງຕ່າງຫາກ.

8. ຂໍ້ຫ້າມສຳລັບພະນັກງານ - ລັດຖະກອນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຮັບຜິດຊອບເກັບ ແລະ ຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ.

ພະນັກງານ - ລັດຖະກອນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຮັບຜິດຊອບເກັບ ແລະ ຄຸ້ມຄອງລາຍຮັບ ຫ້າມ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ແລະ ຂໍ້ມູນສ່ວນຕົວຂອງຜູ້ເສຍຄ່າທຳນຽມ ແລະ ຄ່າບໍລິການ, ກົດໝ່ວງ, ຖ່ວງດຶງ, ປອມແປງເອກະສານ, ເລີ່ນເລີ້ໃນການປະຕິບັດໜ້າທີ່, ປະລະໜ້າທີ່ ຫຼື ຂາດຄວາມຮັບຜິດຊອບ ຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ, ຂໍເອົາ, ຮັບເອົາ ຫຼື ທວງເອົາ ສິນບົນ, ບັງຄັບ ນາບຂູ່ ຜູ້ເສຍ ຫຼື ຜູ້ມອບຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງພາໃຫ້ເສຍຜົນປະໂຫຍດຂອງລັດ;

3. ເກັບລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ໂດຍບໍ່ຖືກຕ້ອງ;

4. ນຳເອົາເງິນຄ່າທຳນຽມ ແລະ ຄ່າບໍລິການທີ່ເກັບໄດ້ໄປນຳໃຊ້ ໂດຍບໍ່ມອບເຂົ້າງົບປະມານແຫ່ງລັດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

9. ຂໍ້ຫ້າມສຳລັບຜູ້ເສຍ ແລະ ຜູ້ມອບຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຜູ້ເສຍ ແລະ ຜູ້ມອບຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫ້າມມີ ພຶດຕິກຳ ດັ່ງນີ້:

1. ທຳລາຍຂໍ້ມູນ, ຫຼັກຖານ, ເຊື່ອງອຳ, ປິດບັງລາຍຮັບ ຫຼື ການລະເມີດກົດໝາຍ ທີ່ຕິດພັນກັບການເສຍ ຫຼື ການມອບຄ່າທຳນຽມ ແລະ ຄ່າບໍລິການ ຂອງຕົນ;

2. ໃຫ້ສິນບົນ ຫຼື ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດ ກັບພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ຈັດເກັບ ແລະ ຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ ເອົາເງິນຂອງລັດ;

3. ປອມແປງ ໃບເກັບເງິນ, ໃບຮັບເງິນ ຫຼື ເອກະສານອື່ນ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

10. ນະໂຍບາຍຕໍ່ຜູ້ມີຜົນງານ

ພະນັກງານ-ລັດຖະກອນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຮັບຜິດຊອບເກັບ ແລະ ຄຸ້ມຄອງລາຍຮັບຈາກຄ່າຄ່າທຳນຽມ ແລະ ຄ່າບໍລິການຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021 ຢ່າງຖືກຕ້ອງ, ປະກອບສ່ວນເຮັດໃຫ້ການ

ຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ໄດ້ມອບເຂົ້າງົບປະມານແຫ່ງລັດທັນຕາມກຳນົດເວລາຈະໄດ້ຮັບການຍ້ອງຍໍຕາມກົດໝາຍ ແລະ ລະບຽບການ.

11. ມາດຕະການຕໍ່ຜູ້ລະເມີດ

ພະນັກງານ-ລັດຖະກອນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຮັບຜິດຊອບເກັບ ແລະ ຄຸ້ມຄອງລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ໄດ້ລະເມີດຂໍ້ຫ້າມ ແລະ ຂໍ້ກຳນົດຕ່າງໆ ຂອງລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021 ຈະຖືກລົງວິໄນຕາມກົດໝາຍ ແລະ ລະບຽບການ ພ້ອມທັງພິຈາລະນາຄວາມຮັບຜິດຊອບທາງບໍລິຫານຂອງຜູ້ເປັນຫົວໜ້າກົມ, ກອງ, ສະຖາບັນ ພາຍໃນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງຕາມທີ່ຕົນໄດ້ກໍ່ຂຶ້ນ.

12. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະບານ ສິບຫ້າ ວັນ.

ລັດຖະມົນຕີ

ນ.ບຸນຄຳ ວໍລະຈິດ